# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 7
## Investment protection
## ການປົກປ້ອງການລົງທຶນ

### 1. ຄວາມໝາຍການປົກປ້ອງການລົງທຶນ

ປະຕິບັດຕາມຫຼັກການຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ລະຫວ່າງ ລັດຖະບານ ແລະ ຜູ້ລົງທຶນໃນ ສປປ ລາວ, ຜູ້ລົງທຶນມີພັນທະຕໍ່ລັດຖະບານຕາມລະບຽບກົດໝາຍ ແລະ ລັດຖະບານເປັນຜູ້ສ້າງເງື່ອນໄຂຄວາມປອດໄພໃນການລົງທຶນເອີ້ນວ່າການປົກປ້ອງການລົງທຶນ.

ການປົກປ້ອງການລົງທຶນນັ້ນ, ໂດຍທົ່ວໄປແລ້ວ ຜູ້ລົງທຶນລ້ວນແຕ່ໄດ້ຮັບສິດສະເໝີພາບໃນການລົງທຶນ, ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນພາຍໃຕ້ລະບຽບກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາສາກົນທີ່ສປປ ລາວ ເປັນພາຄີ.

ສະນັ້ນ, ພາຍໃຕ້ມູມມອງວິທະຍາສາດກົດໝາຍ, ສໍາລັບ ສປປ ລາວ ແລ້ວ ການປົກປ້ອງການລົງທຶນແມ່ນບັນດາມາດຕະການທີ່ກົດໝາຍ ໄດ້ກໍານົດເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງບັນດາຜູ້ລົງທຶນໃນເວລາດໍາເນີນການເຄື່ອນໄຫວລົງທຶນ ດ້ວຍຈຸດປະສົງທາງດ້ານທຸລະກິດ ເພື່ອສ້າງຄວາມປອດໄພທາງດ້ານກົດໝາຍຕໍ່ກັບຊັບສິນ, ທຶນ, ລາຍຮັບ, ບັນດາສິດ ແລະ ຜົນປະໂຫຍດອັນຊອບທໍາອື່ນຂອງຜູ້ລົງທຶນ ດໍາເນີນການເຄື່ອນໄຫວລົງທຶນຢູ່ ສປປ ລາວ.

### 2. ຮູບແບບການປົກປ້ອງການລົງທຶນ

ລັດຖະບານລັດລາວປົກປ້ອງການລົງທຶນ ດ້ວຍຮູບການບໍ່ເອົາລັດເອົາປຽບຜູ້ລົງທຶນ ທີ່ມີການດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ "ລັດຮັບຮູ້ ແລະ ປົກປ້ອງການລົງທຶນຂອງຜູ້ລົງທຶນຢ່າງເຕັມສ່ວນ ໂດຍບໍ່ເກັບເກນ, ຍຶດ ແລະ ໂອນມາເປັນຂອງລັດ ດ້ວຍວິທີການທາງດ້ານບໍລິຫານ ໃນກໍລະນີທີ່ລັດຖະບານ ມີຄວາມຈໍາເປັນນໍາໃຊ້ເພື່ອສາທາລະນະປະໂຫຍດ ຜູ້ລົງທຶນຈະໄດ້ຮັບຄ່າທົດແທນຄືນຕາມມູນຄ່າຕົວຈິງຕາມລາຄາຕະຫຼາດ ໃນເວລາມອບໂອນ ແລະ ດ້ວຍວິທີການຊໍາລະທີ່ຕົກລົງກັນ"[1].

---

[1] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທີII , ໝວດທີ 3, ມາດຕາ 23

ໃນສະພາບການຕົວຈິງ ລັດຖະບານຍັງໄດ້ມີການປົກປ້ອງຜູ້ລົງທຶນໃນກໍລະນີທີ່ມີຂໍ້ຂັດແຍ່ງດ້ວຍຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແບບເປັນທຳ ຫຼື ດຳເນີນຄະດີຕໍ່ຜູ້ກະທຳຜິດໃນການລະເມີດສິດທິຂອງຜູ້ລົງທຶນ. ຮູບການປົກປ້ອງຜູ້ລົງທຶນຈະໄດ້ຮັບການປົກປ້ອງເທົ່າທຽມກັນບໍ່ວ່າຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ.

ບັນດາມາດຕະການປົກປ້ອງການລົງທຶນ ຖືບົດບາດສຳຄັນໃນການດຶງດູດການລົງທຶນ ແລະ ກໍແມ່ນສິ່ງທີ່ຜູ້ລົງທຶນ ຫຼື ນັກລົງທຶນຕ່າງປະເທດໃສ່ໃຈໃນເວລາທີ່ມາລົງທຶນຢູ່ ສປປ ລາວ, ບັນດາມາດຕະການປົກປ້ອງການລົງທຶນ ກໍຄືມາດຕະການຮັບປະກັນການລົງທຶນແມ່ນບັນດາມາດຕະການທີ່ແນໃສ່ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງບັນດາຜູ້ລົງທຶນໃນຕະຫຼອດໄລຍະເຄື່ອນໄຫວການລົງທຶນ, ບັນດາມາດຕະການປົກປ້ອງການລົງທຶນກໍແມ່ນບັນດາການຕົກລົງຈາກຝ່າຍລັດທີ່ຮັບການລົງທຶນກັບບັນດາເຈົ້າຂອງການລົງທຶນກ່ຽວກັບຄວາມຮັບຜິດຊອບຂອງລັດທີ່ຮັບການລົງທຶນຕໍ່ໜ້າສິດ ແລະ ຜົນປະໂຫຍດຕົວຈິງຂອງຜູ້ລົງທຶນ ຫຼື ນັກລົງທຶນ.

### 3. ການປົກປ້ອງຊັບສິນທາງປັນຍາຂອງຜູ້ລົງທຶນ

ລັດຖະບານໄດ້ມີນະໂຍບາຍໃນການປົກປ້ອງຊັບສິນທາງປັນຍາຂອງຜູ້ລົງທຶນ ໂດຍຜ່ານການອອກນິຕິກຳຕ່າງໆເປັນຕົ້ນແມ່ນໄດ້ກຳນົດລະບຽບການ ແລະ ຂັ້ນຕອນກ່ຽວກັບການຍື່ນຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດຕໍ່ຊັບສິນທາງປັນຍາ ແລະ ຄຳຮ້ອງຂໍກັກສິນຄ້າຊົ່ວຄາວ, ການກວດກາສິນຄ້າທີ່ລະເມີດຕໍ່ຊັບສິນທາງປັນຍາ, ການປະຕິບັດສິນໂດຍໜ້າທີ່ (Ex-officio), ການປະຕິບັດຄຳຕັດສິນຂອງສານເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາຂອງເຈົ້າໜ້າທີ່ພາສີມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

ຊັບສິນທາງປັນຍາຂອງຜູ້ລົງທຶນ ແມ່ນ ຜົນງານທີ່ໄດ້ມາຈາກສະຕິປັນຍາຂອງການເຄື່ອນໄຫວລົງທຶນຂອງຜູ້ລົງທຶນ ຊຶ່ງເປັນຜູ້ລົງທຶນປະດິດສ້າງ ແລະ ປະດິດຄິດແຕ່ງຂຶ້ນມາ, ຊັບສິນທາງປັນຍາຂອງຜູ້ລົງທຶນ ແມ່ນຊັບສິນທີ່ຈັບບາຍບໍ່ໄດ້ (Intangible assets) ຊະນິດໜຶ່ງ, ນອກຈາກສັງຫາລິມະຊັບ ແລະ ອະສັງຫາລິມະຊັບ, ຊັບສິນທາງປັນຍາຂອງຜູ້ລົງທຶນ ແບ່ງອອກເປັນ 3 ປະເພດ: ຊັບສິນອຸດສາຫະກຳ(Industrial Property); ພັນພືດໃໝ່ (New Plant Variety); ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ (Copyright and Related Rights).

ການປົກປ້ອງຊັບສິນທາງປັນຍາແມ່ນປະຕິບັດມາດຕະການຕໍ່ຜູ້ລະເມີດສິດຕໍ່ຊັບສິນທາງປັນຍາ ບົນພື້ນຖານການຮ້ອງຂໍຈາກຜູ້ຖືສິດ/ເຈົ້າຂອງສິດ, ຊຶ່ງມາດຕະການດັ່ງກ່າວນີ້ ຈະນຳໃຊ້ສະເພາະແຕ່ສິນຄ້າປອມແປງເຄື່ອງໝາຍການຄ້າ, ສິນຄ້າລະເມີດລິກຂະສິດ ແລະ ສິນຄ້າລະເມີດແບບອຸດສາຫະກຳ ໂດຍປະຕິບັດຕາມລະບຽບ ແລະ ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນຄຳແນະນຳຂອງກະຊວງການເງິນ ແຫ່ງ ສປປ ລາວ[2].

ລັດຖະບານໄດ້ມີນະໂຍບາຍສົ່ງເສີມຫົວຄິດປະດິດສ້າງ, ການປະດິດຄິດແຕ່ງ, ເສດຖະກິດ, ພູມປັນຍາ, ການ ຄຸ້ມຄອງ ແລະ ການປົກປ້ອງທາງດ້ານຊັບສິນທາງປັນຍາເພື່ອຮັບປະກັນຜົນປະໂຫຍດອັນຊອບທຳຂອງຊັບສິນ ທາງປັນຍາ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຊຸກຍູ້ການຄົ້ນຄວ້າ ແລະ ພັດທະນາວິທະຍາສາດ ແລະ ເຕັກໂນໂລ ຊີ, ການຖ່າຍທອດເຕັກໂນໂລຊີຢູ່ພາຍໃນ ແລະ ຈາກຕ່າງປະເທດ ແນໃສ່ສົ່ງເສີມການລົງທຶນ.

[2] ຄຳແນະນຳຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ 0121/ກງ, ລົງວັນທີ 13ມັງກອນ 2022 ວ່າດ້ວຍຄມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາຂອງເຈົ້າໜ້າທີ່ພາສີ, ມາດຕາ 2.

“ລັດ ຮັບຮູ້ ແລະ ປົກປ້ອງຊັບສິນທາງປັນຍາຂອງຜູ້ລົງທຶນທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍວ່າ ດ້ວຍຊັບສິນທາງປັນຍາຂອງ ສປປ ລາວ ຫຼື ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ”[3].

ໂດຍທົ່ວໄປແລ້ວການປົກປ້ອງຊັບສິນທາງປັນຍາ ຂອງຜູ້ລົງທຶນແມ່ນລັດປົກປ້ອງຊັບສິນທາງປັນຍາທີ່ບໍ່ຂັດກັບກົດໝາຍ, ວັດທະນະທຳ ຫຼື ຮີດຄອງປະເພນີອັນດີງາມຂອງຊາດ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະ ຫງົບ, ສຸຂະອະນາໄມ, ສິ່ງແວດລ້ອມ.

ຫຼັກການລວມໃນການປົກປ້ອງຊັບສິນທາງປັນຍາ ເວົ້າລວມ, ເວົ້າສະເພາະກໍຄືການປົກປ້ອງຊັບສິນທາງປັນຍາ ທີ່ເກີດຈາກການລົງທຶນແມ່ນໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ[4].

ສາມາດສັງລວມໄດ້ວ່າ: ລັດຖະບານໄດ້ມີມາດຕະການກ່ຽວກັບການຄຸ້ມຄອງ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາ ເພື່ອຊຸກຍູ້, ສົ່ງເສີມຫົວຄິດປະດິດສ້າງ, ການປະດິດຄິດແຕ່ງ, ເສດຖະກິດພູມປັນຍາ, ການພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ແລະ ການຖ່າຍທອດເຕັກໂນໂລຊີຢູ່ພາຍໃນ ແລະ ຈາກຕ່າງປະເທດ ຮັບປະກັນຜົນປະໂຫຍດຂອງລັດ, ສັງຄົມແນ່ໃສ່ສົ່ງເສີມການຄ້າ, ການລົງທຶນ ແລະ ຄວາມອາດສາມາດໃນການແຂ່ງຂັນຕາມກົນໄກເສດຖະກິດຕະຫຼາດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ທັນເປັນອຸດສາຫະກຳ ແລະ ທັນສະໄໝ.

ການປົກປ້ອງຊັບສິນທາງປັນຍາຂອງຜູ້ລົງທຶນໂດຍພື້ນຖານແມ່ນປະຕິບັດຕາມຫຼັກການດັ່ງນີ້:

+ ຮັບປະກັນຄວາມສອດຄ່ອງກັບແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

+ ຮັບຮູ້, ເຄົາລົບ, ປົກປ້ອງ ແລະ ຮັບປະກັນຄວາມຍຸຕິທຳຕໍ່ເຈົ້າຂອງຊັບສິນທາງປັນຍາຂອງຜູ້ລົງທຶນ;

+ ປົກປ້ອງຊັບສິນອຸດສາຫະກຳ ແລະ ພັນພືດໃໝ່ທີ່ໄດ້ຮັບຈາກການຈົດທະບຽນຕາມກົດໝາຍ;

+ ປົກປ້ອງຜົນງານທາງດ້ານ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດໂດຍທັນທີ;

+ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງສິດຕໍ່ທຸກການສະແຫວງຫາຜົນປະໂຫຍດຈາກຊັບສິນທາງປັນຍາ;

+ ສອດຄ່ອງກັບສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວເປັນພາຄີ.

‘‘ລັດຖະບານຮັບຮູ້ການປະກອບທຶນຂອງວິສາຫະກິດລົງທຶນດ້ວຍຊັບສິນທາງປັນຍາ, ການຕີລາຄາມູນຄ່າຊັບສິນທາງປັນຍາຕ້ອງໄດ້ກຳນົດຂອບເຂດສິດ, ພັນທະ ແລະ ຜົນປະໂຫຍດລະອຽດໄວ້ໃນມະຕິຂອງກອງປະຊຸມຜູ້ຖືຮຸ້ນ ແລະ ສັນຍາຮ່ວມທຶນຂອງວິສາຫະກິດ’’[5].

**4. ການປົກປ້ອງຊັບສິນອຸດສາຫະກຳຂອງຜູ້ລົງທຶນ**(Industrial Property)

---

[3] ກົດໝາຍສົ່ງເສີມການລົງທຶນປີ 2009, ພາກທີIV , ໝວດທີ 3, ມາດຕາ 62

[4] ກົດໝາຍວ່າດ້ວຍຊັບສິນທາງປັນຍາ ( ສະບັບປັບປຸງ ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017.

[5] ມາດຕາ 3, ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ, ສະບັບເລກທີ 300/ນຍ, ລົງວັນທີ 12 ຕຸລາ 2005.

ລັດຖະບານໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ການປົກປ້ອງຊັບສິນອຸດສາຫະກຳ ເພື່ອຊຸກຍູ້, ສົ່ງເສີມຫົວຄິດປະດິດສ້າງ, ເສດຖະກິດພູມປັນຍາ, ການພັກທະນາວິທະຍາສາດ ແລະ ເຕັກໂນໂລຊີ ແລະ ການຖ່າຍທອດເຕັກໂນໂລຊີຢູ່ພາຍໃນ ແລະ ຈາກຕ່າງປະເທດ ຮັບປະກັນຜົນປະໂຫຍດອັນຊອບທຳຂອງເຈົ້າຂອງຊັບສິນອຸດສາຫະກຳ ແລະ ຜົນປະໂຫຍດຂອງລັດ, ສັງຄົມ, ແນໃສ່ສົ່ງເສີມການຄ້າ, ການລົງທຶນ ແລະ ຄວາມອາດສາມາດໃນການແຂ່ງຂັນຕາມກົນໄກເສດຖະກິດຕະຫຼາດ ຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັກທະນາເສດຖະກິດ-ສັງຄົມຂອງຊາ, ຫັນປະເທດເປັນອຸດສາຫະກຳ ແລະ ທັນສະໄໝ.

ຜູ້ລົງທຶນທີ່ມີສິດໄດ້ຮັບການປົກປ້ອງຊັບສິນອຸດສາຫະກຳມີດັ່ງນີ້:

+ ຜູ້ລົງທຶນທີ່ຈົດທະບຽນສ້າງຕັ້ງ ແລະ ດຳເນີນກິດຈະການລົງທຶນຢູ່ ສປປ ລາວ;

+ຜູ້ລົງທຶນທີ່ມີສັນຊາດໃດໜຶ່ງ ຊຶ່ງເປັນພາຄີຂອງສົນທິສັນຍາປາຣີ ຫຼື ຂໍ້ຕົກລົງສາກົນອື່ນກ່ຽວກັບການປົກປ້ອງຊັບສິນອຸດສາຫະກຳທີ່ ສປປ ລາວເຂົ້າຮ່ວມເປັນພາຄີ;

+ຜູ້ລົງທຶນທີ່ມີທີ່ຢູ່ອາໃສຢູ່ ສປປ ລາວ ຫຼື ຢູ່ໃນອານາເຂດຂອງປະເທດທີ່ເປັນພາຄີຂອງສົນທິສັນຍາປາຣີ ແລະ ຂໍ້ຕົກລົງສາກົນອື່ນກ່ຽວກັບການປົກປ້ອງຊັບສິນອຸດສາຫະກຳທີ່ ສປປ ລາວເຂົ້າຮ່ວມເປັນພາຄີ;

+ຜູ້ລົງທຶນທີ່ມີສະຖານທີ່ດຳເນີນການຄ້າ ແລະ ອຸດສາຫະກຳຕົວຈິງ ແລະ ມີປະສິດທິຜົນຢູ່ໃນອານາເຂດຂອງປະເທດໃດໜຶ່ງທີ່ເປັນພາຄີຂອງສົນທິສັນຍາປາຣີ ຫຼື ຂໍ້ຕົກລົງສາກົນອື່ນກ່ຽວກັບການປົກປ້ອງຊັບສິນອຸດສາຫະກຳທີ່ ສປປ ລາວເຂົ້າຮ່ວມເປັນພາຄີ;

+ ຜູ້ລົງທຶນຕ່າງປະເທດທີ່ມີສິດໄດ້ຮັບການປົກປ້ອງຊັບສິນອຸດສາຫະກຳກໍຈະໄດ້ຮັບການປະຕິບັດຢ່າງເທົ່າທຽມກັນກັບຜູ້ລົງທຶນທີ່ເປັນຄົນລາວ.

**5. ການປົກປ້ອງພັນພືດໃໝ່ຂອງຜູ້ລົງທຶນ (New Plant Variety)**

ການປົກປ້ອງພັນພືດໃໝ່ຂອງຜູ້ລົງທຶນໄດ້ສະແດງອອກຄື: ລັດຖະບານໄດ້ກຳນົດຫຼັກການ ແລະ ລະບຽບການກ່ຽວກັບການຈັດຕັ້ງປະຕິບັດວຽກງານພັນພືດໃໝ່ ເປັນຕົ້ນ ການຈົດທະບຽນພັນພືດພັນໃໝ່, ການດຳເນີນການຫຼັກການຈົດທະບຽນພັນພືດໃໝ່, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອີງການຄຸ້ມຄອງວຽກງານພັນພືດໃໝ່ ເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາກ່ຽວກັບພັນພືດໃໝ່ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

ພັນພືດໃໝ່ແມ່ນພັນພືດທີ່ຍັງບໍ່ທັນຮູ້ຈັກທົ່ວໄປ ໝາຍເຖິງກຸ່ມຂອງພືດທີ່ມີລັກສະນະທາງພຶກສາຊາດຢ່າງດຽວກັນ ຊຶ່ງສາມາດກຳນົດຄຸນລັກສະນະຕ່າງໆທີ່ເປັນຜົນມາຈາກປະເພດພັນທຸກຳໃດໜຶ່ງ ຫຼື ປະເພດພັນທຸກຳຮ່ວມກັນ, ມີຄວາມແຕກຕ່າງຈາກກຸ່ມອື່ນໃນພືດຊະນິດດຽວກັນຢ່າງໜ້ອຍໜຶ່ງຄຸນລັກສະນະ, ມີຄວາມສະໝໍ່າສະເໝີ ແລະ ມີຄວາມຄົງຕົວໃນເວລານຳໄປຂະຫຍາຍພັນ, ໂດຍບໍ່ຄຳນຶງວ່າຈະຄົບຕາມເງື່ອນໄຂສຳລັບການໃຫ້ສິດການປົກປ້ອງກຸ່ມຂອງພືດດັ່ງກ່າວໃຫ້ແກ່ນັກປະສົມພັນພືດກໍຕາມ[6].

---

[6] ຂໍ້ຕົກລົງຂອງລັດຖະມົນຕີກະຊວງວິທະຍາດ ແລະ ເຕັກໂນໂລຊີ,ສະບັບເລກທີ 2823/ກວຕ, ລົງວັນທີ 17 ທັນວາ 2019 ວ່າດ້ວຍພັນພືດໃໝ່, ມາດຕາ 2.

**6. ການປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດຂອງຜູ້ລົງທຶນ (Copyright and Related Rights)**

ລັດຖະບານໄດ້ກຳນົດຫຼັກການ ແລະ ລະບຽບການກ່ຽວກັບການຈັດຕັ້ງປະຕິບັດວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດເປັນຕົ້ນການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ການຈຳກັດ ແລະ ການຍົກເວັ້ນສິດຕໍ່ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ການໂອນ, ການເປັນຕົວແທນ, ອົງການຈັດຕັ້ງລິຂະສິດແບບລວມໝູ່ ແລະ ການທົບທວນຄືນທາງດ້ານບໍລິຫານ ແລະ ອົງການຄຸ້ມຄອງວຽກງານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ການໂອນສິດ ເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດໃຫ້ເປັນເອກະພາບໃນຂອງເຂດທົ່ວປະເທດ.

ລິຂະສິດໝາຍເຖິງສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕໍ່ຜົນງານປະດິດຄິດແຕ່ງຂອງຕົນເອງທາງດ້ານສິລະປະກຳ, ວັນນະກຳ ຫຼື ວິທະຍາສາດ;

ສິດກ່ຽວຂ້ອງກັບລິຂະສິດ ໝາຍເຖິງສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕໍ່ຜົນງານທາງດ້ານການສະແດງ, ການບັນທຶກສຽງ, ລາຍການແຜ່ພາບ ຫຼື ລາຍການຜ່ານສັນຍານທີ່ເຂົ້າລະຫັດ ຫຼື ບໍ່ເຂົ້າລະຫັດ[7].

**7. ມາດຕະການປົກປ້ອງການລົງທຶນ**

ໂດຍທົ່ວໄປແລ້ວມາດຕະການໃນການປົກປ້ອງການລົງທຶນ ແມ່ນໄດ້ປະຕິບັດຜ່ານບັນດາມາດຕະການດັ່ງນີ້:

1) ປົກປ້ອງກຳມະສິດຕໍ່ກັບຊັບສິນ ແລະ ທຶນ: ລັດຖະບານຈະບໍ່ຍຶດ, ຮິບດ້ວຍມາດຕະການທາງດ້ານບໍລິຫານຕໍ່ກັບຊັບສິນ ແລະ ທຶນຂອງຜູ້ລົງທຶນທີ່ໄດ້ມາໂດຍຖືກຕ້ອງຕາມກົດໝາຍ; ຍົກເວັ້ນໃນກໍລະນີທີ່ຈຳເປັນຮີບດ່ວນເພື່ອຄວາມສະຫງົບ, ປອດໄພ ແລະ ຜົນປະໂຫຍດຂອງຊາດ, ແຕ່ຜູ້ລົງທຶນຈະໄດ້ຮັບການໃຊ້ແທນຄ່າເສຍຫາຍຕາມລາຄາທ້ອງຕະຫຼາດ ແລະ ຜູ້ລົງທຶນຈະໄດ້ຮັບສິ່ງເອື້ອອຳນວຍຄວາມສະດວກ ເພື່ອລົງທຶນໃນຂົງເຂດທີ່ເໝາະສົມ;

2) ປົກປ້ອງແກ້ໄຂຢ່າງເຕັມສ່ວນກ່ຽວກັບສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນໃນກໍລະນີມີການປ່ຽນແປງຂໍ້ກຳນົດ ຫຼື ລະບຽບການທາງດ້ານກົດໝາຍ ຊຶ່ງໄດ້ສ້າງຜົນເສຍຫາຍຕໍ່ຜົນປະໂຫຍດຂອງຜູ້ລົງທຶນ;

3) ປົກປ້ອງສິດເອກະລາດໃນການນຳໃຊ້ຜົນກຳໄລທີ່ໄດ້ຮັບຈາກການເຄື່ອນໄຫວລົງທຶນ ພາຍຫຼັງທີ່ມີການປະຕິບັດບັນດາພັນທະຕ່າງໆສຳເລັດຕາມຂໍ້ກຳນົດຂອງກົດໝາຍ; ປົກປ້ອງໃຫ້ແກ່ຜູ້ລົງທຶນຕ່າງປະເທດໄດ້ສົ່ງຜົນກຳໄລ, ທຶນ ແລະ ລາຍຮັບອື່ນ; ປົກປ້ອງແກ້ໄຂບັນດາຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການເຄື່ອນການລົງທຶນ.

ຕາມລະບຽບການແລ້ວ, ບັນດາມາດຕະການປົກປ້ອງຕົ້ນຕໍແມ່ນ:

+ ປົກປ້ອງກຳມະສິດຕໍ່ກັບຊັບສິນ (ຊັບສິນຖືກກົດໝາຍຂອງຜູ້ລົງທຶນຈະບໍ່ຖືກເກັບເກນ ຫຼື ຮິບດ້ວຍມາດຕະການບໍລິຫານ, ກໍລະນີທີ່ລັດຖະບານນຳໃຊ້, ຊື້ຊັບສິນ ເພື່ອການປ້ອງການຊາດ, ປ້ອງກັນຄວາມສະຫງົບ ຫຼື ເພື່ອຜົນ

[7] ຂໍ້ຕົກລົງຂອງລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 2824/ກວຕ, ລົງວັນທີ 17ທັນວາ 2019 ວ່າດ້ວຍລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ມາດຕາ 2.

ປະໂຫຍດຂອງຊາດ, ສະພາບຫຍຸ້ງຍາກພາວະວິໄສ, ຕ້ານ ແລະ ສະກັດກັ້ນໄພທຳມະຊາດ, ຜູ້ລົງທຶນຈະໄດ້ຮັບການຊຳລະ , ໃຊ້ແທນຄ່າເສຍຫາຍຕາມກົດໝາຍທີ່ກ່ຽວຂ້ອງ);

+ ປົກປ້ອງກ່ຽວກັບການໂອນລາຍຮັບ ຫຼື ຜົນກຳໄລທີ່ຖືກກົດໝາຍຂອງຜູ້ລົງທຶນອອກໄປຕ່າງປະເທດ (ພາຍຫຼັງທີ່ປະຕິບັດພັນທະທາງການເງິນຕໍ່ກັບລັດຖະບານລາວ, ຜູ້ລົງທຶນຕ່າງປະເທດສາມາດໂອນໄປຕ່າງປະເທດກ່ຽວກັບຊັບສິນຄື: ທຶນຮອນ, ຜົນກຳໄລ, ລາຍຮັບຈາກການເຄື່ອນໄຫວລົງທຶນ, ເງິນ ແລະ ຊັບສິນອື່ນທີ່ນອນໃນກຳມະສິດຖືກຕາມກົດໝາຍຂອງຜູ້ລົງທຶນ);

+ ປົກປ້ອງການລົງທຶນໃນກໍລະນີມີການປ່ຽນແປງທາງດ້ານກົດໝາຍ;

+ ປົກປ້ອງສິດຜົນປະໂຫຍດໃຫ້ຜູ້ລົງທຶນໃນການເຄື່ອນໄຫວທຸລະກິດ: ຄືບໍ່ຜູກມັດຜູ້ລົງທຶນຕ້ອງຊື້, ນຳໃຊ້ສິນຄ້າ, ບໍລິການໃນປະເທດ; ນຳເຂົ້າສົ່ງອອກສິນຄ້າດ້ວຍອັດຕາສ່ວນໃດໜຶ່ງ ຫຼື ຕັ້ງສຳນັກງານໃນສະຖານ ສະຖານ ທີ່ໃດໜຶ່ງຕາມຄວາມຕ້ອງການຂອງລັດຖະບານ...);

+ ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ ຖ້າຫາກມີການຖືກລະເມີດ;

ນອກຈາກນັ້ນ, ກ່ຽວກັບບັນດາໂຄງການທີ່ສຳຄັນ, ລັດຖະບານຍັງປົກປ້ອງພັນທະໃນການປະຕິບັດສັນຍາຂອງອົງການລັດ ຫຼື ວິສາຫະກິດຂອງລັດເຂົ້າຮ່ວມປະຕິບັດໂຄງການລົງທຶນ.

**References:**


1. ກົດໝາຍສົ່ງເສີມການລົງທຶນ 2016;
2. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;
3. ຄຳແນະນຳຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ 0121/ກງ, ລົງວັນທີ 13ມັງກອນ 2022 ວ່າດ້ວຍຄມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາຂອງເຈົ້າໜ້າທີ່ພາສີ;
4. ກົດໝາຍສົ່ງເສີມການລົງທຶນປີ 2009;
5. ກົດໝາຍວ່າດ້ວຍຊັບສິນທາງປັນຍາ ( ສະບັບປັບປຸງ ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
6. ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ, ສະບັບເລກທີ 300/ນຍ, ລົງວັນທີ 12 ຕຸລາ 2005;
7. ຂໍ້ຕົກລົງຂອງລັດຖະມົນຕີກະຊວງວິທະຍາດ ແລະ ເຕັກໂນໂລຊີ,ສະບັບເລກທີ 2823/ກວຕ, ລົງວັນທີ 17 ທັນວາ 2019 ວ່າດ້ວຍພັນພືດໃໝ່;
8. ຂໍ້ຕົກລົງຂອງລັດຖະມົນຕີກຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 2824/ກວຕ, ລົງວັນທີ 17 ທັນວາ 2019 ວ່າດ້ວຍລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.